ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=====000=====-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 006 /ຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 20 SEP 2013

# ລະບຽບ
# ວ່າດ້ວຍການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ

- ອີງຕາມ ກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21 /ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ ສະບັບເລກທີ 188/ນຍ ລົງວັນທີ 24 ກໍລະກົດ 2013.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ອອກລະບຽບ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ລະບຽບສະບັບນີ້ ຜັນຂະຫຍາຍມາດຕາ 118 ຂອງກົດໝາຍວ່າດ້ວຍຫຼັກຊັບ ເພື່ອກຳນົດຫຼັກການ, ວິທີການ ແລະ ຂັ້ນຕອນ ກ່ຽວກັບການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ເຮັດໃຫ້ການໂອນຮຸ້ນດັ່ງກ່າວດຳເນີນໄປຢ່າງຖືກຕ້ອງ ແລະ ສອດຄ່ອງກັບລະບຽບກົດໝາຍຂອງ ສປປ ລາວ ແນໃສ່ຮັບປະກັນຄວາມເປັນລະບຽບຮຽບຮ້ອຍໃນການເຄື່ອນໄຫວວຽກງານຫຼັກຊັບ ແລະ ປະກອບສ່ວນເຂົ້າໃນການພັດທະນາຕະຫຼາດທຶນຂອງ ສປປ ລາວ.

**ມາດຕາ 2 ການໂອນຮຸ້ນຈົດທະບຽນ**

ການໂອນຮຸ້ນຈົດທະບຽນ ແມ່ນການປ່ຽນແປງກຳມະສິດ ກ່ຽວກັບຮຸ້ນຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ຈາກຜູ້ຖືຄອງຮຸ້ນໜຶ່ງໄປຫາຜູ້ຖືຄອງຮຸ້ນອື່ນ ດ້ວຍເຫດຜົນໃດໜຶ່ງ ໂດຍຖືກຕ້ອງຕາມລະບຽບກົດໝາຍ ທີ່ບໍ່ຜ່ານຂັ້ນຕອນການຊື້-ຂາຍຮຸ້ນໃນຕະຫຼາດຫຼັກຊັບ.

**ມາດຕາ 3 ຂອບເຂດການນຳໃຊ້**

ລະບຽບສະບັບນີ້ ນຳໃຊ້ສຳລັບ ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ, ຜູ້ລົງທຶນ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ.

**ມາດຕາ 4 ຫຼັກການໂອນ**

ການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ຄວາມສະໝັກໃຈ;
2. ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ໂອນ ແລະ ຜູ້ຮັບໂອນ;
3. ຄວາມສະເໝີພາບ;
4. ຄວາມສອດຄ່ອງກັບລະບຽບກົດໝາຍ ຂອງ ສປປ ລາວ.

## ໝວດທີ 2
## ຮູບແບບ, ເງື່ອນໄຂ ແລະ ຂັ້ນຕອນ ໃນການໂອນຮຸ້ນຈົດທະບຽນ

**ມາດຕາ 5 ຮູບແບບການໂອນຮຸ້ນຈົດທະບຽນ**

ການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ປະກອບດ້ວຍ ສີ່ ຮູບແບບ ດັ່ງນີ້:

1. ການໂອນຮຸ້ນ ຕາມສັນຍາ;
2. ການໂອນຮຸ້ນ ຕາມການສືບທອດມູນມໍລະດົກ ຫຼື ການແບ່ງປັນສິນສົມສ້າງ;
3. ການໂອນຮຸ້ນ ຕາມຄໍາຕັດສິນ ຫຼື ຄໍາພິພາກສາ ຂອງສານ;
4. ການໂອນຮຸ້ນ ຕາມການຮ້ອງຂໍ.

**ມາດຕາ 6 ຮູບແບບການໂອນຮຸ້ນຕາມສັນຍາ**

ຮູບແບບການໂອນຮຸ້ນຕາມສັນຍາ ແມ່ນການປ່ຽນແປງກໍາມະສິດ ກ່ຽວກັບຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ຈາກຜູ້ຖືຄອງຮຸ້ນໜຶ່ງໄປຫາຜູ້ຖືຄອງຮຸ້ນອື່ນ ຕາມທີ່ບົ່ງໄວ້ໃນສັນຍາ ເປັນຕົ້ນ: ສັນຍາຄໍ້າປະກັນ, ສັນຍາມອບຊັບ, ສັນຍາຢືມຊັບ ຊຶ່ງເນື້ອໃນສັນຍາດັ່ງກ່າວ ຕ້ອງສອດຄ່ອງກັບກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາ ແລະ ກົດໝາຍວ່າດ້ວຍການຄໍ້າປະກັນການປະຕິບັດສັນຍາ.

**ມາດຕາ 7 ຮູບແບບການໂອນຮຸ້ນຕາມການສືບທອດມູນມໍລະດົກ ຫຼື ການແບ່ງປັນສິນສົມສ້າງ**

ຮູບແບບການໂອນຮຸ້ນຕາມການສືບທອດມູນມໍລະດົກ ແມ່ນການປ່ຽນແປງກໍາມະສິດ ກ່ຽວກັບຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບຂອງຜູ້ຖືຄອງຮຸ້ນທີ່ເສຍຊີວິດ ໃຫ້ແກ່ຜູ້ໄດ້ຮັບການສືບທອດມູນມໍລະດົກ ຕາມກົດໝາຍ ຫຼື ຕາມພິໄນກໍາ.

ສໍາລັບການໂອນຮຸ້ນຕາມການແບ່ງປັນສິນສົມສ້າງ ແມ່ນການປ່ຽນແປງກໍາມະສິດ ກ່ຽວກັບຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ທີ່ຄູ່ຜົວເມັຍ, ຜົວ ຫຼື ເມັຍ ຖືຄອງຢູ່ນັ້ນ ມາເປັນ ກໍາມະສິດຂອງຜົວ ຫຼື ເມັຍ ກ່ອນ ຫຼື ຫຼັງການຢ່າຮ້າງ ດ້ວຍຄວາມສະໝັກໃຈ, ຕາມລະບຽບກົດໝາຍ, ຕາມຄໍາຕັດສິນ ຫຼື ຄໍາພິພາກສາ ຂອງສານ.

**ມາດຕາ 8 ຮູບແບບການໂອນຮຸ້ນຕາມ ຄໍາຕັດສິນ ຫຼື ຄໍາພິພາກສາ ຂອງສານ**

ຮູບແບບການໂອນຮຸ້ນຕາມ ຄໍາຕັດສິນ ຫຼື ຄໍາພິພາກສາ ຂອງສານ ແມ່ນການປ່ຽນແປງກໍາມະສິດ ກ່ຽວກັບການຖືຄອງຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ຈາກຜູ້ຖືຄອງຮຸ້ນໜຶ່ງໄປຫາຜູ້ຖືຄອງຮຸ້ນອື່ນ ຕາມຄໍາຕັດສິນ ຫຼື ຄໍາພິພາກສາ ຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ.

**ມາດຕາ 9 ຮູບແບບການໂອນຮຸ້ນຕາມການຮ້ອງຂໍ**

ຮູບແບບການໂອນຮຸ້ນຕາມການຮ້ອງຂໍ ແມ່ນການປ່ຽນແປງກຳມະສິດ ກ່ຽວກັບຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ຕາມການຮ້ອງຂໍຂອງຜູ້ຖືຮຸ້ນ ເປັນຕົ້ນ ແມ່ນຜູ້ຖືຮຸ້ນທີ່ມີອຳນາດຄວບຄຸມ ຊຶ່ງມີຈຸດປະສົງ ເພື່ອປັບປຸງໂຄງສ້າງຜູ້ຖືຮຸ້ນຂອງບໍລິສັດ, ພັດທະນາເສດຖະກິດ-ສັງຄົມ ຫຼື ເພື່ອຜົນປະໂຫຍດສ່ວນລວມ, ບໍລິຈາກ ຫຼື ຈຸດປະສົງອື່ນ ໂດຍຜ່ານການປະກອບຄຳເຫັນຈາກ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 10 ເງື່ອນໄຂການໂອນຮຸ້ນຈົດທະບຽນ**

ຜູ້ໂອນ ແລະ ຜູ້ຮັບໂອນ ຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນຜູ້ທີ່ມີຄວາມສາມາດທາງດ້ານການປະພຶດ ຫຼື ເປັນຜູ້ທີ່ໄດ້ຮັບການແຕ່ງຕັ້ງ ຈາກສານ ໃຫ້ເປັນຜູ້ຕ່າງໜ້າບຸກຄົນອື່ນ ໃນກໍລະນີບໍ່ມີຄວາມສາມາດທາງດ້ານການປະພຶດ;
2. ມີບັນຊີຫຼັກຊັບ ກັບ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ທີ່ເປັນສະມາຊິກຂອງຕະຫຼາດຫຼັກຊັບ;
3. ມີບັນຊີເງິນຝາກປະຢັດ ຫຼື ກະແສລາຍວັນ ກັບ ທະນາຄານທຸລະກິດ ທີ່ເປັນເຄືອຂ່າຍຂອງບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ;
4. ເງື່ອນໄຂອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 11 ຂັ້ນຕອນການໂອນຮຸ້ນຈົດທະບຽນ**

ການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ປະກອບເອກະສານການໂອນຮຸ້ນ;
2. ພິຈາລະນາການໂອນຮຸ້ນ;
3. ຂຶ້ນທະບຽນການໂອນຮຸ້ນ;
4. ແຈ້ງຜົນການໂອນຮຸ້ນ.

**ມາດຕາ 12 ປະກອບເອກະສານການໂອນຮຸ້ນ**

ຜູ້ທີ່ມີຈຸດປະສົງໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ຕ້ອງຍື່ນຄຳຮ້ອງ ແລະ ເອກະສານປະກອບ ດັ່ງລຸ່ມນີ້ ຕໍ່ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ.

1. ໃບຄຳຮ້ອງຂໍໂອນຮຸ້ນຕາມແບບພິມ ຂອງຕະຫຼາດຫຼັກຊັບ;
2. ໃບຢັ້ງຢືນ ກ່ຽວກັບບັນຊີຫຼັກຊັບຂອງຜູ້ໂອນ ແລະ ຜູ້ຮັບໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ຈາກບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ;
3. ໃບມອບສິດຈາກຜູ້ໂອນຮຸ້ນ ໃຫ້ແກ່ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ເພື່ອປະຕິບັດສິດ ແລະ ໜ້າທີ່ແທນຕົນ;
4. ໃບຢັ້ງຢືນທີ່ຢູ່ປັດຈຸບັນ, ສຳເນົາປຶ້ມສຳມະໂນຄົວ ຫຼື ສຳເນົາບັດປະຈຳຕົວ ຂອງຜູ້ໂອນ ແລະ ຜູ້ຮັບໂອນ, ກໍລະນີ ຜູ້ໂອນ ຫຼື ຜູ້ຮັບໂອນ ເປັນຄົນຕ່າງປະເທດ ກໍຕ້ອງສຳເນົາໜັງສືຜ່ານແດນ;
5. ສຳເນົາ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນຖານະນິຕິບຸກຄົນ ຂອງຜູ້ໂອນ ແລະ ຜູ້ຮັບໂອນ ທີ່ເປັນນິຕິບຸກຄົນ, ກໍລະນີ ນິຕິບຸກຄົນ ດັ່ງກ່າວ ຖືສັນຊາດຕ່າງປະເທດ ໃບທະບຽນວິສາຫະກິດ ຫຼື ໃບຢັ້ງຢືນຖານະຕິບຸກຄົນນັ້ນ ຕ້ອງໄດ້ຮັບການຢັ້ງຢືນ ຈາກອົງການທະບຽນສານຂອງປະເທດທີ່ອອກໃບອະນຸຍາດສ້າງຕັ້ງນິຕິບຸກຄົນດັ່ງກ່າວ;
6. ສັນຍາຄ້ຳປະກັນ, ສັນຍາມອບຊັບ, ສັນຍາຍົກຊັບ ແລະ ສັນຍາ ອື່ນທີ່ກ່ຽວຂ້ອງ ໂດຍຜ່ານການຢັ້ງຢືນຄວາມຖືກຕ້ອງ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;

7. ໃບຢັ້ງຢືນ ການເສຍຊີວິດ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ ຫຼື ສະຖານທູດຂອງປະເທດກ່ຽວຂ້ອງ ປະຈຳຢູ່ ສປປ ລາວ (ຖ້າເສຍຊີວິດ);
8. ໃບຢັ້ງຢືນ ການແບ່ງປັນມູນມໍຣະດົກຕາມກົດໝາຍ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;
9. ສຳເນົາ ພິໄນກຳ ທີ່ໄດ້ຮັບການຢັ້ງຢືນ ຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;
10. ຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ;
11. ໃບຢັ້ງຢືນ ກ່ຽວກັບການແບ່ງປັນສິນສົມສ້າງ ທີ່ໄດ້ຮັບການຢັ້ງຢືນຈາກອົງການທີ່ມີສິດອຳນາດກ່ຽວຂ້ອງ;
12. ກໍລະນີຈຳເປັນ ຕ້ອງມີເອກະສານເພີ່ມເຕີມ ທີ່ບໍ່ໄດ້ກຳນົດ ໄວ້ໃນມາດຕານີ້ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຈະແຈ້ງໃຫ້ເພີ່ມຕື່ມ ຕາມແຕ່ລະກໍລະນີ.

**ມາດຕາ 13 ພິຈາລະນາການໂອນຮຸ້ນ**

ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ທີ່ໄດ້ຮັບຄຳຮ້ອງ ແລະ ເອກະສານປະກອບ ການໂອນຮຸ້ນ ຕ້ອງກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນ ເພື່ອຍື່ນເອກະສານດັ່ງກ່າວ ຕໍ່ຕະຫຼາດຫຼັກຊັບ.

ຕະຫຼາດຫຼັກຊັບ ຕ້ອງພິຈາລະນາ ແລະ ດຳເນີນການໂອນຮຸ້ນ ພາຍໃນກຳນົດເວລາ ສາມ ວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານປະກອບການໂອນຮຸ້ນ ຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ.

**ມາດຕາ 14 ການຂຶ້ນທະບຽນການໂອນຮຸ້ນ**

ການຂຶ້ນທະບຽນໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ມີຜົນສັກສິດ ພາຍຫຼັງທີ່ ຕະຫຼາດຫຼັກຊັບ ໄດ້ສຳເລັດການຫັກລົບບັນຊີຫຼັກຊັບຈາກ ຜູ້ໂອນ ເຂົ້າໃນ ບັນຊີຫຼັກຊັບຂອງ ຜູ້ຮັບໂອນ ຢ່າງຖືກຕ້ອງ.

**ມາດຕາ 15 ການແຈ້ງຜົນການໂອນຮຸ້ນ**

ຕະຫຼາດຫຼັກຊັບ ຕ້ອງແຈ້ງຜົນການໂອນຮຸ້ນ ດ້ວຍການອອກໃບຢັ້ງຢືນຄວາມຖືກຕ້ອງກ່ຽວກັບ ການໂອນຮຸ້ນດັ່ງກ່າວ ໃຫ້ແກ່ຜູ້ຮ້ອງຂໍຊາບ ໂດຍຜ່ານ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ. ກໍລະນີປະຕິເສດການຂໍໂອນຮຸ້ນດັ່ງກ່າວ ຕະຫຼາດຫຼັກຊັບ ຕ້ອງແຈ້ງເຫດຜົນຂອງການປະຕິເສດຢ່າງເປັນລາຍລັກອັກສອນ ໃຫ້ແກ່ຜູ້ຮ້ອງຂໍຊາບເຊັ່ນດຽວກັນ. ການແຈ້ງຜົນການໂອນຮຸ້ນ ຕ້ອງປະຕິບັດພາຍໃນກຳນົດເວລາ ໜຶ່ງ ວັນລັດຖະການ.

## ໝວດທີ 3
## ສິດ ແລະ ໜ້າທີ່ ຂອງຜູ້ມີສ່ວນຮ່ວມໃນການໂອນຮຸ້ນຈົດທະບຽນ

**ມາດຕາ 16 ຜູ້ມີສ່ວນຮ່ວມໃນການໂອນຮຸ້ນຈົດທະບຽນ**

ຜູ້ມີສ່ວນຮ່ວມໃນການໂອນຮຸ້ນຈົດທະບຽນ ປະກອບດ້ວຍ ຜູ້ໂອນ, ຜູ້ຮັບໂອນ, ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ ລວມທັງ ບຸກຄົນ ຫຼື ນິຕິບຸກຄົນອື່ນ ທີ່ກ່ຽວຂ້ອງກັບການໂອນຮຸ້ນຈົດທະບຽນດັ່ງກ່າວ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງຜູ້ໂອນ**

ຜູ້ໂອນມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງຂໍ້ມູນໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມຄວາມເປັນຈິງ;
2. ໂອນຮຸ້ນ ຕາມທີ່ກຳນົດໄວ້ໃນ ມາດຕາ 5, 10 ແລະ 11 ຂອງລະບຽບສະບັບນີ້;
3. ປະຕິບັດ ສິດ ແລະ ໜ້າທີ່ ອື່ນຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງຜູ້ຮັບໂອນ**

ຜູ້ຮັບໂອນມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ສະໜອງຂໍ້ມູນໃຫ້ຄົບຖ້ວນ ແລະ ຖືກຕ້ອງຕາມຄວາມເປັນຈິງ;
2. ຮັບໂອນຮຸ້ນຕາມຂັ້ນຕອນ ທີ່ກຳນົດໄວ້ໃນ ມາດຕາ 5, 10 ແລະ 11 ຂອງລະບຽບສະບັບນີ້;
3. ໄດ້ຮັບສິດ, ຜົນປະໂຫຍດ, ມີໜ້າທີ່ ແລະ ພັນທະ ທັງໝົດທີ່ຕິດພັນກັບການໂອນຮຸ້ນ;
4. ປະຕິເສດ ກ່ຽວກັບການຮັບໂອນຮຸ້ນ;
5. ເປີດບັນຊີເງິນຝາກ ແລະ ຖອນເງິນສົດເຂົ້າໃນບັນຊີເງິນຝາກ ກັບທະນາຄານທີ່ເປັນເຄືອຂ່າຍຂອງບໍລິສັດຫຼັກຊັບ ເພື່ອຮັບປະກັນການຊໍາລະຄ່າທໍານຽມ;
6. ເສຍພັນທະ ອາກອນ ແລະ ຄ່າທໍານຽມ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍກ່ຽວຂ້ອງ;
7. ປະຕິບັດ ສິດ ແລະ ໜ້າທີ່ ອື່ນຕາມການກຳນົດຂອງ ສໍານັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງຕະຫຼາດຫຼັກຊັບ**

ຕະຫຼາດຫຼັກຊັບມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄ້ວາ ແລະ ພິຈາລະນາ ຄໍາຮ້ອງ ແລະ ເອກະສານ ປະກອບການໂອນຮຸ້ນຈົດທະບຽນໃຫ້ສອດຄ່ອງຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນ ມາດຕາ 10 ຂອງລະບຽບສະບັບນີ້;
2. ຂຶ້ນທະບຽນ ແລະ ແຈ້ງຜົນກ່ຽວກັບ ການໂອນຮຸ້ນຈົດທະບຽນໃຫ້ແກ່ ຜູ້ໂອນ ຫຼື ຜູ້ຮັບໂອນ;
3. ອອກໃບຢັ້ງຢືນຄວາມຖືກຕ້ອງ ກ່ຽວກັບການໂອນຮຸ້ນຈົດທະບຽນ ພາຍໃນກຳນົດເວລາ ໜຶ່ງ ວັນລັດຖະການ ນັບແຕ່ ວັນສໍາເລັດການໂອນຮຸ້ນ ເປັນຕົ້ນໄປ;
4. ປະຕິເສດ ການໂອນຮຸ້ນຈົດທະບຽນຕໍ່ ຜູ້ໂອນ ຫຼື ຜູ້ຮັບໂອນ ທີ່ມີເງື່ອນໄຂ ແລະ ເອກະສານ ບໍ່ຖືກຕ້ອງຕາມທີ່ກຳນົດໄວ້ໃນ ມາດຕາ 10 ແລະ 12 ຂອງລະບຽບສະບັບນີ້ ຫຼື ຕາມການສະເໜີຂອງອົງການທີ່ມີສິດອໍານາດ;
5. ປະສານສົມທົບ ແລະ ໃຫ້ການຮ່ວມມືກັບ ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ກ່ຽວກັບການໂອນຮຸ້ນຈົດທະບຽນ;
6. ເກັບພັນທະອາກອນໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ພ້ອມທັງ ເກັບຄ່ານໍານຽມ ທີ່ຕິດພັນກັບການໂອນຮຸ້ນຈົດທະບຽນ;
7. ປະຕິບັດລະບອບລາຍງານໃຫ້ແກ່ ສໍານັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ຊາບຕາມການກຳນົດໄວ້ໃນລະບຽບການສະເພາະ;
8. ປະຕິບັດ ສິດ ແລະ ໜ້າທີ່ ອື່ນຕາມການກຳນົດຂອງ ສໍານັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ**

ບໍລິສັດຫຼັກຊັບ ຫຼື ທະນາຄານດູແລຊັບສິນ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ກວດກາຄວາມຄົບຖ້ວນ ແລະ ຖືກຕ້ອງ ຂອງຄໍາຮ້ອງ ແລະ ເອກະສານປະກອບໃນການໂອນຮຸ້ນຈົດທະບຽນ;
2. ປະສານສົມທົບ ແລະ ໃຫ້ຄວາມຮ່ວມມື ກັບຕະຫຼາດຫຼັກຊັບ ໃນການໂອນຮຸ້ນຈົດທະບຽນ;
3. ຮຽກເອົາຂໍ້ມູນ ຫຼື ສະໜອງຂໍ້ມູນ ກ່ຽວກັບການໂອນຮຸ້ນຈົດທະບຽນ ຈາກລູກຄ້າຂອງຕົນ;
4. ປະຕິບັດ ສິດ ແລະ ໜ້າທີ່ ອື່ນຕາມການກຳນົດຂອງ ສໍານັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## ໝວດທີ 4
## ອາກອນ, ຄ່າທຳນຽມ ແລະ ຂໍ້ຫ້າມ ກ່ຽວກັບການໂອນຮຸ້ນຈົດທະບຽນ

**ມາດຕາ 21 ອາກອນ ແລະ ຄ່າທຳນຽມ**

ການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ທຸກຄັ້ງ ຕ້ອງເສຍອາກອນ ຕາມທີ່ກົດໝາຍວ່າດ້ວຍສ່ວຍສາອາກອນ ສະບັບປັບປຸງ ເລກທີ 05/ສພຊ, ລົງວັນທີ 20 ທັນວາ 2011 ໄດ້ກຳນົດໄວ້ໃນ ມາດຕາ 47 ຂໍ້ 3 ພ້ອມທັງ ເສຍຄ່າທຳນຽມໃຫ້ແກ່ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ ແລະ ທະນາຄານດູແລຊັບສິນ ຕາມແຈ້ງການສະເພາະຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 22 ຂໍ້ຫ້າມກ່ຽວກັບການໂອນຮຸ້ນຈົດທະບຽນ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດໜຶ່ງ ດຳເນີນການໂອນຮຸ້ນຈົດທະບຽນ ຫຼື ມີພຶດຕິກຳໃດໜຶ່ງ ບໍ່ວ່າທາງກົງ ຫຼື ທາງອ້ອມ ດັ່ງນີ້:

1. ໂອນຮຸ້ນຈົດທະບຽນທີ່ມີຄຳສັ່ງຫ້າມໂອນຈາກອົງການທີ່ມີສິດອຳນາດ;
2. ໂອນຮຸ້ນ ດ້ວຍຄວາມບໍ່ບໍລິສຸດໃຈ ເປັນຕົ້ນ ການໂອນຮຸ້ນໂດຍບໍ່ໄດ້ຮັບອະນຸຍາດ ຈາກຜູ້ຖືຮຸ້ນ, ບໍ່ມີຄຳຕັດສິນ ຫຼື ຄຳພິພາກສາຂອງສານ;
3. ສວຍໃຊ້ຊ່ອງຫວ່າງທາງດ້ານນິຕິກຳໃນການໂອນຮຸ້ນ ເພື່ອຫຼີກລ້ຽງການສົ່ງຄຳສັ່ງຊື້-ຂາຍ ຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ;
4. ໂອນຮຸ້ນໃຫ້ແກ່ບຸກຄົນອື່ນ ເພື່ອກາຍເປັນຜູ້ມີອຳນາດຄວບຄຸມ ກໍ່ໃຫ້ເກີດຄວາມບໍ່ຍຸຕິທຳໃຫ້ແກ່ຜູ້ຖືຮຸ້ນອື່ນ;
5. ໂອນຮຸ້ນໂດຍບໍ່ສອດຄ່ອງ ຕາມທີ່ກົດໝາຍວ່າດ້ວຍການສືບທອດມູນມໍຣະດົກ ກຳນົດໄວ້ໃນ ມາດຕາ 25;
6. ຕົວະຍົວະຫຼອກລວງ, ນຳໃຊ້ຄວາມຮຸນແຮງ, ບັງຄັບນາບຂູ່ ໃຫ້ບຸກຄົນ ຫຼື ນິຕິບຸກຄົນອື່ນ ຮັບໂອນຮຸ້ນຂອງຕົນ;
7. ສົມຮູ້ຮ່ວມຄິດ ກັບຜູ້ຮັບໂອນ ຫຼື ບຸກຄົນອື່ນ ເພື່ອຫຼີກລ້ຽງຄວາມຜິດ ຫຼື ດຳເນີນການໂອນຮຸ້ນທີ່ບໍ່ສອດຄ່ອງກັບລະບຽບກົດໝາຍ;
8. ດຳເນີນການໂອນຮຸ້ນໃດໜຶ່ງໂດຍບໍ່ສອດຄ່ອງ ຕາມທີ່ໄດ້ກຳນົດໄວ້ໃນລະບຽບສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ຫຼື ຕາມການສະເໜີຂອງອົງການທີ່ມີສິດອຳນາດກ່ຽວຂ້ອງ;
9. ແກ່ຍາວເວລາໃນການໂອນຮຸ້ນຈົດທະບຽນ ພາຍຫຼັງທີ່ໄດ້ຮັບເອກະສານກ່ຽວກັບການໂອນຮຸ້ນຄົບຖ້ວນ ແລະ ຖືກຕ້ອງແລ້ວ;
10. ຂໍ້ຫ້າມອື່ນ ຕາມການກຳນົດຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ.

## ໝວດທີ 5
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 23 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຜົນງານດີເດັ່ນໃນການຈັດຕັ້ງປະຕິບັດລະບຽບສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນໆ ຕາມລະບຽບການສະເພາະ.

**ມາດຕາ 24  ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດລະບຽບສະບັບນີ້ ແລະ ລະບຽບກົດໝາຍອື່ນທີ່ກ່ຽວຂ້ອງ ທີ່ກໍ່ໃຫ້ເກີດຄວາມເສັຍຫາຍແກ່ລັດ, ສັງຄົມ, ບຸກຄົນ ຫຼື ນິຕິບຸກຄົນ ຈະຖືກສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສັຍຫາຍທາງແພ່ງ ຫຼື ຮັບຜິດຊອບທາງອາຍາ.

ກໍລະນີ ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຫ້າມໃນ ມາດຕາ 22 ແລະ ຂໍ້ກຳນົດອື່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບສະບັບນີ້ ຈະຖືກປັບໃໝໃນອັດຕາສ່ວນ ສາມສິບຫ້າ ສ່ວນຮ້ອຍ ຂອງມູນຄ່າການໂອນຕົວຈິງ. ພ້ອມທັງເສັຍພັນທະອາກອນ ແລະ ຄ່າທຳນຽມໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງ.

## ໝວດທີ 6
## ບົດບັນຍັດສຸດທ້າຍ

**ມາດຕາ 25  ການຈັດຕັ້ງປະຕິບັດ**

ຕະຫຼາດຫຼັກຊັບ, ບໍລິສັດຫຼັກຊັບ, ທະນາຄານດູແລຊັບສິນ ແລະ ພາກສ່ວນອື່ນຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດລະບຽບສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 26  ຜົນສັກສິດ**

ລະບຽບສະບັບນີ້ ມີຜົນສັກສິດນັບແຕ່ວັນທີ ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ ລົງລາຍເຊັນເປັນຕົ້ນໄປ.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ**

ສົມສະຫວາດ ເລັ່ງສະຫວັດ